ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****** **** ******

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ສຳນັກງານ ຄຄຊ
ເລກທີ 0285
ວັນທີ 29 MAR 2016
ໂທລະສັບ 021 217770

ເລກທີ: 14 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 24 ມີນາ 2016

# ລາຍງານການເຄື່ອນໄຫວປະຈຳອາທິດ
# ທີ 14/03/2016 ຫາ 18/03/2016 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ
# ຂອງທະນາຄານແຫ່ງ ສປປ ລາວ

## I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາອ່ອນຄ່າລົງ ເມື່ອທຽບໃສ່ເງິນເອີໂຣ ແລະ ຫຼາຍສະກຸນເງິນໃນພາກພື້ນອາຊີ ພາຍຫຼັງຕົວເລກການຂະຫຍາຍຕົວຂອງເສດຖະກິດໃນຂົງເຂດເອີຣົບຂະຫຍາຍຕົວເພີ່ມຂຶ້ນ 1,6% ໃນໄຕມາດ 4/2015 ຈາກ 1,5% ທຽບໄລຍະດຽວກັນຂອງປີຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 07/03/2016 | ອາທິດນີ້ 15/03/2016 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,0979 | 1,1144 | -1,49% |
| ໂດລາ/ເຢນ | 113,64 | 113,74 | -0,09% |
| ໂດລາ/ບາດ | 35,42 | 35,08 | 0,98% |
| ໂດລາ/ເປໂຊ | 46,84 | 46,51 | 0,70% |
| ໂດລາ/ຣູເປັຍ | 13.064,44 | 13.040,00 | 0,19% |
| ໂດລາ/ໂດລາສິງກະໂປ | 1,3802 | 1,3740 | 0,45% |
| ໂດລາ/ຢວນ | 6,5130 | 6,4935 | 0,30% |

#### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກເພີ່ມຂຶ້ນ 3,59% ຈາກ 38,36 ໂດລາ/ບາເຣວ ມາເປັນ 39,73 ໂດລາ/ບາເຣວ ພາຍຫຼັງ ສ.ປ ຈີນ ນຳເຂົ້ານ້ຳມັນດິບເພີ່ມຂຶ້ນຈາກ 1,72 ລ້ານບາເຣວ/ວັນ ເປັນ 8,03 ລ້ານບາເຣວ/ວັນ ໃນເດືອນ 2/2016 ທຽບເດືອນຜ່ານມາ.ສຳລັບລາຄາຄຳໃນຕະຫຼາດໂລກຫຼຸດລົງ 0,59% ຈາກ 1.263,15 ໂດລາ/ອອນ ມາເປັນ 1.255,70 ໂດລາ/ອອນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,06% ສຳລັບອັດຕາ ທທກ ແຕ່ອ່ອນຄ່າລົງ 0,07% ອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 0,92% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 0,66% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,39% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 0,58% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 2,15% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 1,61% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 07/03/2016 | | | ອາທິດນີ້ 15/03/2016 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8.121,85 | 8.144,95 | 8.126,63 | 8.119,27 | 8.145,95 | 8.121,43 | 0,03% | -0,01% | 0,06% |
| ບາດ | 229,89 | 231,23 | 231,15 | 231,93 | 233,42 | 233,31 | -0,88% | -0,94% | -0,92% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.130,43 | 8.165,67 | 8.148,05 | 8.136,82 | 8.170,73 | 8.153,78 | -0,08% | -0,06% | -0,07% |
| ບາດ | 230,62 | 231,57 | 231,09 | 232,05 | 233,21 | 232,63 | -0,62% | -0,71% | -0,66% |
| ຜິດດ່ຽງອັດຕາ ທທກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0,11% | 0,25% | 0,26% | 0,22% | 0,30% | 0,40% | | | |
| ບາດ | 0,32% | 0,14% | -0,03% | 0,05% | -0,09% | -0,29% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ຫຼຸດລົງ 0,84% ທຽບໃສ່ວັນທີ 11/03/2016, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 18,89%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,06% ເມື່ອທຽບໃສ່ວັນທີ 11/03/2016, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 13,66%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 14/03/2016) ເຫັນວ່າ ທທກ ຊື້ໂດລາສຸດທິ 77,29 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 121,79 ລ້ານໂດລາ ແລະ ຂາຍໂດລາໄດ້ 44,50 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 3.063,82 ລ້ານບາດ (ໃນນີ້ ຊື້ບາດໄດ້ 389,02 ລ້ານບາດ ແລະ ຂາຍບາດໄດ້ 3.452,84 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາຫຼຸດລົງ 39,81% ແລະ ຫຼຸດລົງ 49,23% ສຳລັບເງິນບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈຳນວນ 0,90 ລ້ານໂດລາ ແລະ ເງິນບາດມີຈຳນວນ 104,32 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈຳນວນ 3,70 ລ້ານໂດລາ ສ່ວນເງິນບາດແມ່ນບໍ່ໄດ້ມີການຊື້-ຂາຍ;

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍໂດລາໄດ້ສຸດທິ ຈຳນວນ 36,17 ລ້ານໂດລາ ແຕ່ຊື້ບາດໄດ້ສຸດທິ ຈຳນວນ 2.064,92 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 09/03/2016 | | ອາທິດທີ 14/03/2016 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1, ການຊື້ເງິນຕາຕ່າງປະເທດ** | **226,81** | **397,13** | **121,79** | **389,02** | **-46,30%** | **-2,04%** |
| - ທ/ຄທຸລະກິດລັດ | 17,60 | 225,36 | 15,45 | 151,88 | -12,22% | -32,61% |
| - ທ/ຄທຸລະກິດອື່ນໆ | 209,21 | 171,76 | 106,35 | 237,14 | -49,17% | 38,07% |
| **2, ການຂາຍເງິນຕາຕ່າງປະເທດ** | **49,47** | **7.169,34** | **44,50** | **3.452,84** | **-10,04%** | **-51,84%** |
| - ທ/ຄທຸລະກິດລັດ | 21,66 | 166,52 | 24,14 | 140,76 | 11,46% | -15,47% |
| - ທ/ຄທຸລະກິດອື່ນໆ | 27,81 | 7.002,82 | 20,36 | 3.312,08 | -26,78% | -52,70% |
| **ຊື້-ຂາຍສຸດທິ ທທກ** | **177,34** | **-6.772,22** | **77,29** | **-3.063,82** | **-56,42%** | **-54,76%** |
| ຜິດດ່ຽງ ຊື້-ຂາຍ | 78,19% | -1705,31% | 63,46% | -787,57% | | |
| ມູນຄ່າການຊື້-ຂາຍ | **276,28** | **7.566,47** | **166,29** | **3.841,86** | **-39,81%** | **-49,23%** |
| **3, ການຊື້ຂາຍລະຫວ່າງທຫລ ກັບ ທທກ** | **-12,55** | **-85,50** | **-3,70** | **0,00** | | |
| - ທຫລ ຊື້ຈາກ ທທກ | 12,31 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 24,85 | 85,50 | 3,70 | 0,00 | | |
| **4, ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **1,81** | **83,70** | **0,90** | **104,32** | | |
| **5, ທຫລ ກັບ ພາກສ່ວນ ອື່ນໆ** | **-170,33** | **5.609,93** | **-36,17** | **2.064,92** | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,28 | 5.609,93 | 15,42 | 2.064,92 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 170,61 | 0,00 | 51,59 | 0,00 | | |

## 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ໃນເດືອນ 03/2016 ຢູ່ໃນລະດັບ 1,09% (ຕົວເລກຄາດຄະເນ) ຫຼຸດລົງ 0,23% ຈາກ 1,32% ໃນເດືອນ 02/2016 ສາເຫດຍ້ອນຄວາມຕ້ອງການຄາດວ່າຈະຫຼຸດລົງ ພາຍຫຼັງທີ່ເພີ່ມຂຶ້ນໃນເດືອນຜ່ານມາ ຈາກໄລຍະບຸນປີໃໝ່ຈີນ ເຊິ່ງຈະເຮັດໃຫ້ລາຄາເຂົ້າສູ່ລະດັບປົກກະຕິ.

## 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 205,14 ລ້ານໂດລາສະຫະລັດທຽບເທົ່າ ເຊິ່ງເພີ່ມຂຶ້ນ 21% ທຽບໃສ່ອາທິດຜ່ານມາ.

## 2.6 ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 982 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 68,44% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 754,81 ຕື້ກີບ ເພີ່ມຂຶ້ນ 28,61% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (11-17/03/2016) ມີຈຳນວນ 2.381 ຄັ້ງ ໂດຍມີມູນຄ່າ 326,21 ຕື້ກີບ ເພີ່ມຂຶ້ນ 69,80% ຊຶ່ງທະນາຄານສົ່ງເສີມກະສິກຳ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 572 ຄັ້ງ.

### 2.7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.147,96 ຈຸດ, ຫຼຸດລົງ 0,34% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 107.300 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 480,14 ລ້ານກີບ, ເພີ່ມຂຶ້ນ 385,04% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 49,18% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 4.317 ກີບ/ຮຸ້ນ, ຫຼຸດລົງ 148 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 72.800 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 314,30 ລ້ານກີບ, ເພີ່ມຂຶ້ນ 583,35% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 26,07% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,51%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 5.797 ກີບ/ຮຸ້ນ, ຫຼຸດລົງ 47 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 20.300 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 117,67 ລ້ານກີບ, ເພີ່ມຂຶ້ນ 131,44% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງ ປະເທດກວມເອົາ 61,39% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,83%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາສະເລ່ຍ 6.000 ກີບ/ຮຸ້ນ, ຫຼຸດລົງ 150 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ໂດຍໃນອາທິດນີ້ບໍ່ມີການຈັບຄູ່ຊື້-ຂາຍຮຸ້ນ LWPC. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[4].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2.800 ກີບ/ຮຸ້ນ, ຫຼຸດລົງ 50 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 0,56 ລ້ານກີບ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,66%[5].

ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາປິດທີ່ 3.400 ກີບ/ຮຸ້ນ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 14.000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 47,60 ລ້ານກີບ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 32,49% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ SVN ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 4,22%[6].

## 3. ວຽກງານອື່ນໆ ທີ່ພົ້ນເດັ່ນ.

- ສໍາເລັດການຈັດກອງປະຊຸມ: ❶ກອງປະຊຸມ ປຶກສາຫາລືຄະນະເບື້ອໃນ ເພື່ອກະກຽມການເປັນປະທານ ແລະ ເຈົ້າພາບຈັດກອງປະຊຸມອາຊຽນ+3ໃນປີ 2016 ຂອງ ທຫລ, ❷ກອງປະຊຸມສໍາມະນາ ເຜີຍແຜ່ຂໍ້ຕົກລົງວ່າດ້ວຍການສ້າງຕັ້ງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດ ທີ່ ທຫລ, ❸ກອງປະຊຸມຄົ້ນຄວ້າ-ປຶກສາຫາລື ກັບບັນດາພາກສ່ວນກ່ຽວຂ້ອງ ຕໍ່ຮ່າງຄໍາສັ່ງຂອງນາຍົກລັດຖະມົນຕີວ່າດ້ວຍການຍຶດ, ອາຍັດທຶນທີ່ພົວພັນກັບການຟອກເງິນ ທີ່ ທຫລ;
- ສໍາເລັດການເຂົ້າຮ່ວມຮັບຟັງການລົງໂຄສະນາຫາສຽງຂອງຜູ້ສະໝັກຮັບເລືອກຕັ້ງເປັນສະມະຊິກສະພາແຫ່ງຊາດຊຸດທີ VIII ຢູ່ ສະຖາບັນການທະນາຄານ;
- ສໍາເລັດບົດລາຍງານສະພາບເສດຖະກິດມະຫາພາກ, ທະນາຄານທຸລະກິດລັດ ແລະ ສັງລວມສະຖິຕິໂດຍຫຍໍ້ ເພື່ອໃຫ້ທ່ານ ຜູ້ວ່າການ ທຫລ ເຂົ້າຮ່ວມກອງປະຊຸມອາຊຽນ+3;

---

[2]ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%, 1% ສໍາລັບຜູ້ລົງທຶນປະເພດບຸກຄົນ ແລະ 1% ສໍາລັບຜູ້ລົງທຶນປະເພດສະຖາບັນ;

[3]ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 25%, 1% ສໍາລັບຜູ້ລົງທຶນປະເພດບຸກຄົນ ແລະ 5% ສໍາລັບຜູ້ລົງທຶນປະເພດສະຖາບັນ;

[4]ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;

[5]ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;

[6]ສັດສ່ວນຖືຄອງຮຸ້ນ SVN ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ.

- ສຳເລັດການຄົ້ນຄວ້າຮ່າງ MOU ຂອງທະນາຄານ CIMB ກ່ຽວກັບການຂົນເງິນສົດລະຫວ່າງທະນາຄານ ເພື່ອໃຫ້ທ່ານຜູ້ວ່າການພິຈາລະນາອະນຸມັດ;
- ສຳເລັດການເຂົ້າຮ່ວມຊິມ-ເຊຍກິລາເຕະບານລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານພັດທະນາລາວ ທີ່ສະໜາມກິລາເຈົ້າອານຸວົງ;
- ສຳເລັດການອອກແຮງງານລວມ ເພື່ອຂໍ່ານັບຮັບຕ້ອນວັນເລືອກຕັ້ງສະມະຊິກສະພາແຫ່ງຊາດ ຊຸດທີ VIII ແລະ ສະມະຊິກສະພາຂັ້ນແຂວງນະຄອນຫຼວງ.

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກຳນົດໄວ້ໃນແຜນວຽກງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;
- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ;
- ສືບຕໍ່ພິມທະນະບັດງວດທີ 5 ຊຸດ 2 ປະເພດໃບ 2.000 ກີບໃໝ່ ຈຳນວນ 30 ລ້ານໃບ;
- ສືບຕໍ່ຄົ້ນຄວ້າ: ❶ ຄົ້ນຄວ້າລະບຽບກ່ຽວກັບການປັບໄໝ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❷ ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ, ❸ ຄົ້ນຄວ້າ ແລະ ປັບປຸງຮ່າງຄຳແນະນຳວ່າດ້ວຍການຍຶດ ຫຼື ອາຍັດທຶນ ທີ່ພົວພັນກັບການຟອກເງິນ, ❹ສືບຕໍ່ປັບປຸງໂຄງສ້າງຂອງຮ່າງດຳລັດ ວ່າດ້ວຍການເຄື່ອນໄຫວວຽກງານຂໍ້ມູນຂ່າວສານສິນເຊື່ອ, ❺ສືບຕໍ່ຄົ້ນຄວ້າການຄຸ້ມຄອງບໍລິສັດຫຼັກຊັບຕາມການຕີລາຄາຄວາມສ່ຽງ (Risk Based Supervision) ຕາມຫຼັກການ IOSCO;
- ກະກຽມການເປັນປະທານ ແລະ ເຈົ້າພາບ ກອງປະຊຸມຂັ້ນສູງອາຊຽນ ແລະ ອາຊຽນ+3 ຂອງ ສປປ ລາວ ໃນປີ 2016;
- ສືບຕໍ່ປະຕິບັດເງື່ອນໄຂ PRSO 8-11 ຕາມແຜນການ.

ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.

ພາສີ ພິມມະກອນ